# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ

# ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນ ພະຫັດ ວັນທີ 9 ກັນຍາ ປີ 2021

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດ ຖະແຫຼງຂ່າວ ຂອງຄະນະສະເພາະກິດ **ປະຈຳວັນພະຫັດ ວັນທີ 9 ກັນຍາ ປີ 2021**.

- ຂ້າພະເຈົ້າ ດຣ. ສີສະຫວາດ ສຸດທານີລະໄຊ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ ສປປ ລາວ,  ໃນທົ່ວໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

- ❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 8 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **4,322** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **166** ຄົນ ເຊິ່ງ**ຕິດເຊື້ອໃນຊຸມຊົນ 82 ຄົນ** ເປັນຜູ້ສຳຜັດໃກ້ຊິດນຳຜູ້ຕິດເຊື້ອທີ່ຜ່ານມາ ແລະ **ກໍລະນີນຳເຂົ້າ ມີ 84 ຄົນ** ຈາກ ສະຫວັນນະເຂດ 35 ຄົນ, ນະຄອນຫຼວງວຽງຈັນ 23 ຄົນ, ຫຼວງພະບາງ 10 ຄົນ, ຈຳປາສັກ 7 ຄົນ, ຄຳມ່ວນ 6 ຄົນ ແລະ ສາລະວັນ 3 ຄົນ. ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກຕ່າງປະເທດ ເຂົ້າຕາມຈຸດຜ່ານແດນສາກົນ.

**ຜູ້ຕິດເຊື້ອໃນຊຸມຊົນ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງແມ່ນເປັນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອທີ່ຜ່ານມາ ລາຍລະອຽດດັ່ງນີ້:**

- **ຄຳມ່ວນ 36 ຄົນ**: ໃນ 36 ຄົນ ແມ່ນຈາກຈຸດເກັບຕົວຢ່າງ ມັດທະຍົມຈອມທອງ 24ຄົນ , ທີມເກັບຕົວຢ່າງເຄື່ອນທີ່ 4 ຄົນ, ຈຸດເກັບຕົວຢ່າງໂຮງໝໍແຂວງ 8 ຄົນ ລາຍລະອຽດ ກຳລັງເກັບກຳຂໍ້ມູນ ແລະ ຈະແຈ້ງບັນດາທ່ານຊາບພາຍຫຼັງ.
- **ຈຳປາສັກ 13 ຄົນ:** ແມ່ນພົວພັນກັບຜູ້ຕິດເຊື້ອໃນກຸ່ມໂຮງໝໍຊຸມຊົນເມືອງປະທຸມພອນ
- **ບໍ່ແກ້ວ 11 ຄົນ:** ໃນນີ້ມາຈາກເຂດເສດຖະກິດພິເສດ 10 ຄົນ ເປັນຄົນຈີນ , 1 ຄົນ ແມ່ນແຮງງານລາວທີ່ເຂົ້າມາດ່ານແຂວງສະຫວັນນະເຂດກັກໂຕຢູ່ນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ ແລ້ວກັບໄປແຂວງບໍ່ແກ້ວ ກວດພົບເຊື້ອໃນໄລຍະກັກໂຕຕໍ່.
- **ສາລະວັນ 9 ຄົນ**: ໃນນີ້ພະນັກງານແພດ 2 ຄົນທີ່ເຮັດວຽກຢູ່ສູນຈຳກັດບໍລິເວນກວດພົບ ເຊື້ອໃນຊ່ວງກັກໂຕພາຍຫຼັງປະຕິໜ້າທີ່ສຳເລັດ, 7 ຄົນແມ່ນເຈົ້າໜ້າທີ່ ປກສ ທີ່ໄດ້ປະຊຸມ ຮ່ວມກັນກັບຈຸ້ມໄອຍະການແຂວງທີ່ຕິດເຊື້ອຜ່ານມາ.

- **ສະຫວັນນະເຂດ 5  ຄົນ:**  2 ຄົນເປັນເຈົ້າໜ້າທີ່ຕຳຫຼວດ, 1 ຄົນເປັນພະນັກງານບໍລິສັດເກັບຂີ້ເຫຍື້ອ, 1 ຄົນເປັນພະນັກງານບໍລິສັດບັນໂດ ຢູ່ຫຼັກ 9 ແລະ ອີກ 1 ຄົນເປັນກຳມະກອນຢູ່ບ້ານໂພນສະຫວ່າງເໜືອ ນະຄອນໄກສອນ.
- **ຫຼວງນ້ຳທາ 3 ຄົນ:** ທັງ 3 ແມ່ນເປັນຄົນຈີນທີ່ເດີນທາງມາຈາກເຂດເສດຖະກິດພິເສດແຂວງບໍ່ແກ້ວ ເຂົ້າໄປກວດຢູ່ດ່ານບໍ່ເຕນເພື່ອກຽມກັບຄືນປະເທດ.
- **ນະຄອນຫຼວງວຽງຈັນ 3 ຄົນ:** ເປັນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອຜ່ານມາ, 1 ຄົນຢູ່ບ້ານອ່າງໃຫ່ຍ ເມືອງສີໂຄດຕະບອງ ໄດ້ກັກໂຕຢູ່ບ້ານ, 1 ຄົນ ບ້ານສະພັງໝໍ້ ເມືອງໄຊເສດຖາ ໄດ້ກັກໂຕຢູ່ບ້ານ ແລະ ອີກ 1 ຄົນ ຢູ່ບ້ານທົ່ງກາງ ເມືອງສີສັດຕະນາກ ໄດ້ກັກໂຕຢູ່ໂຮງແຮມ.

- **ຫຼວງພະບາງ 2 ຄົນ:** 1 ຄົນແມ່ນເດີນທາງຈາກບ້ານໂຊກຄຳ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ແລະ ໄປເກັບຕົວຢ່າງໃນໄລຍະກັກໂຕຢູ່ສູນຈຳກັດບໍລິເວນແຂວງ ຫຼວງພະບາງ ແລະ 1 ຄົນ ແມ່ນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອຜ່ານມາທີ່ກັກໂຕຢູ່ບ້ານ.

➢ ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.

➢ ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **16,742 ຄົນ**, ເສຍຊີວິດ ສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **4,219** ຄົນ.

➢ **ສຳລັບ ບ້ານ ທີ່ຖືກກຳນົດເປັນບ້ານແດງໃໝ່ໃນນະຄອນຫຼວງວຽງຈັນ ແມ່ນບໍ່ມີ**

- ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19 ສໍາລັບ ນະຄອນຫຼວງວຽງຈັນ ຢູ່**ຈຸດເກັບຕົວຢ່າງບຶງຂະຫຍອງ** ເຊິ່ງເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີການລາຍງານຄົນຕິດເຊື້ອ.
- ສໍາລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກໍານົດໄວ້.

## ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 8 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈໍານວນທັງໝົດ **2,143** ຄົນ.

- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **93** ສູນ ແລະ **54** ໂຮງແຮມ , ມີຜູ້ຈຳກັດບໍລິເວນ **7,754** ຄົນ.

➢ **ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ 223,340,969 (567,228 ໃໝ່), ເສຍຊີວິດທັງໝົດ 4,608,179 (9,245 ໃໝ່), ປິ່ນປົວຫາຍດີ 199,842,067 (585,045 ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ ສະຫະລັດອາເມລິກາ**,** ອິນເດຍ ແລະ ບຣາຊິວ.

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

- ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກ່ວາໝູ່ແມ່ນ ປະເທດໄທ ເຊິ່ງມີຜູ້ຕິດເຊື້ອໃໝ່ **14,176** ແລະ ເສຍຊີວິດໃນມື້ດຽວ **228** ຄົນຮອງລົງມາແມ່ນ ສສ ຫວຽດນາມ ມີລາຍງານຜູ້ຕິດເຊື້ອໃໝ່ **12,680** ຄົນ ແລະ ເສຍຊີວິດໃນມື້ດຽວ **434** ຄົນ.

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**

- ສະຖານະການລະບາດຂອງພະຍາດໂຄວິດ-19ໃນທົ່ວໂລກ, ບັນດາປະເທດອ້ອມຂ້າງ ແລະ ສສປ ລາວ ແມ່ນຍັງບໍ່ມີທ່າອຽງຫຼຸດລົງ ເຊິ່ງເຮັດໃຫ້ເກີດມີຜົນກະທົບຢ່າງຫຼວງຫຼາຍ ບໍ່ວ່າຈະເປັນດ້ານສຸຂະພາບ, ດ້ານເສດຖະກິດ, ສັງຄົມ-ວັດທະນະທຳ, ຄົມມະນາຄົມ ຂົນສົ່ງ, ແລະ ອື່ນໆ, ຫຼາຍກິດຈະການຖືກປິດເປັນເວລາດົນ, ມີແຮງງານທີ່ຫ່ວາງງານຈຳນວນ

ຫຼາຍລວມທັງແຮງງານລາວທີ່ຕົກຄ້າງຢູ່ປະເທດອ້ອມຂ້າງ ແລ້ວກັບຄືນມາບ້ານເກີດເມືອງນອນເຮັດໃຫ້ມີການຕິດເຊື້ອພະຍາດກໍລະນີນໍາເຂົ້າໃນແຕ່ລະວັນເປັນຈໍານວນຫຼາຍ

- ນອກຈາກກໍລະນີຕິດເຊື້ອນໍາເຂົ້າແລ້ວ ຍັງມີການລາຍງານຕິດເຊື້ອໃນຊຸມຊົນໃສ່ພະນັກງານດ່ານໜ້າ, ຄອບຄົວພີ່ນ້ອງ ແລະ ພະນັກງານໃນສໍານັກງານອົງການ, ບໍລິສັດຕ່າງໆທີ່ເຊື່ອມໂຍງຈາກກໍລະນີນໍາເຂົ້າ. ເນື່ອງຈາກການລະບາດ ປັດຈຸບັນເປັນສາຍພັນເດວຕາທີ່ມີອັດຕາການຕິດເຊື້ອຢ່າງໄວວາ, ນັບແຕ່ຕົ້ນເດືອນ ສິງຫາ ເຖິງ ເດືອນ ກັນຍາ 2021 ມີການລາຍງານ ການຕິດເຊື້ອໃນພະນັກງານດ່ານໜ້າ ແມ່ນມີເຖິງ 121 ຄົນ, ຫຼາຍກ່ວາໝູ່ ແມ່ນ ແຂວງຈໍາປາສັກ, ສະຫວັນນະເຂດ, ຄໍາມ່ວນ, ນະຄອນຫຼວງວຽງຈັນ ຕາມລະດັບ, ຕົວເລກນີ້ສະແດງໃຫ້ເຫັນວ່າພວກເຮົາມີຄວາມເປັນຫ່ວງ ເພາະ ມີຜົນກະທົບໃສ່ຈໍານວນ ບຸກຄະລາກອນທີ່ ເຂົ້າມາຮັບໄຊ້ໃນ ສູນຈໍາກັດບໍລິເວນ, ໂຮງໝໍພາກສະໜາມ, ດ່ານເຂົ້າອອກ, ອື່ນໆ ແລະ ອາດເປັນປັດໃຈນຶ່ງທີ່ສະແດງໃຫ້ເຮົາເຫັນວ່າ ວົງຈອນ

ຂອງພະຍາດ ອາດຈະມີການບົ່ມຊ້ອນໃນຊຸມຊົນ ຫຼື ມາດຕະການໃນການປ້ອງກັນຕົນເອງ ຍັງບໍ່ໄດ້ດີເທົ່າທີ່ຄວນ.

- ສະນັ້ນ ການປະຕິບັດມາດຕະການທີ່ທາງ ຄະນະສະເພາະກິດວາງອອກແມ່ນເປັນສິ່ງສຳຄັນ ແລະ ທຸກຄົນໃນສັງຄົມຈະຕ້ອງປະຕິບັດຢ່າງເຂັ້ມງວດ ທັງໝົດນີ້ກໍ່ແມ່ນເພື່ອຮັບປະກັນຄວາມປອດໄພໃຫ້ແກ່ທຸກໆຄົນໃນສັງຄົມ.
- ທຸກຄົນຈຶ່ງພ້ອມພຽງກັນ ຈັດຕັ້ງປະຕິບັດໂດຍສະເພາະ ແມ່ນການຮັກສາໄລຍະຫ່າງ, ຫຼີກເວັ້ນການເດີນທາງໄປສະຖານທີ່ສ່ຽງ, ສະຖານທີ່ແອອັດ, ສະຖານທີ່ອາກາດບໍ່ຖ່າຍເທ. ບໍ່ໃຫ້ຊຸມແຊວເປັນກຸ່ມ, ໃສ່ຜ້າອັດປາກ-ດັງ, ໝັ່ນລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມືທີ່ມີທາດເຫຼົ້າ 70 ຂຶ້ນໄປ, ຮັກສາມາລະຍາດໃນການໄອ-ຈາມ ແລະ ສິ່ງສຳຄັນທີ່

ສຸດ ແມ່ນໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ໃນການສຳພາດ ກ່ຽວກັບ ບັນດາຂໍ້ມູນການເຄື່ອນໄຫວ ແລະ ການສຳພັດໃກ້ຊິດຂອງຜູ້ຕິດເຊື້ອ ເພາະເປັນສິ່ງທີ່ສຳຄັນຫຼາຍ ເພື່ອຈະນຳພາໄປຫາການຊອກຄົ້ນຫາກໍລະນີທີ່ຕິດເຊື້ອໃໝ່ໃຫ້ທັນເວລາ ແລະ ສາມາດຄວບຄຸມ ຂອບເຂດການລະບາດ ບໍ່ໃຫ້ແຜ່ອອກເປັນວົງກ້ວາງ.

- ຂໍຮຽກຮ້ອງມາຍັງ ພໍ່ແມ່, ພີ່ນ້ອງ, ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງພ້ອມໃຈກັນ ປະຕິບັດການດຳລົງຊີວິດປົກກະຕິແບບໃໝ່ (new normal) ແລະ ພວກເຮົາທຸກຄົນ ຕ້ອງຮ່ວມແຮງຮ່ວມໃຈ ແລະ ສາມັກຄີກັນ, ເພື່ອພ້ອມກັນຜ່ານຜ່າວິກິດນີ້ໄປດ້ວຍກັນ ແລະ ສາມາດກັບມາດຳລົງຊີວິດປົກກະຕິໂດຍໄວ.

- ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບໄຂ້ຍຸງລາຍໃນ ສປປລາວ, ນັບແຕ່ວັນທີ 26/12/2020-8/09/2021 ທົ່ວປະເທດມີກໍລະນີລາຍງານ ທັງໝົດ **1.032** ກໍລະນີ ແລະ ເສຍຊີວິດ **00** ກໍລະນີ.

  - ວັນທີ 8/09/2021 ມີລາຍງານທັງໝົດ 03 ກໍລະນີ ແລະ ເສຍຊີວິດ **00** ກໍລະນີ.

**ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳວັນ ພະຫັດ ວັນທີ 9 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້. ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານທີ່ຕິດຕາມຊົມ ແລະ ຮັບຟັງ (ຂອບໃຈ)**